## ຄຳນຳ

ປະຈຸບັນຊາວໜຸ່ມຊົນນະບົດຫຼັ່ງໄຫຼເຂົ້າສູ່ຕົວເມືອງ ເພື່ອໄປເຮັດວຽກຕາມໂຮງຈັກໂຮງງານຕ່າງໆ ດັ່ງນັ້ນ, ຈຶ່ງພາໃຫ້ ຂາດແຮງງານຫຼົກກ້າ ແລະປັກດຳຄ່າແຮງງານປັກດຳສູງຂຶ້ນເລື້ອຍໆ. ການເຮັດນາຫວ່ານກໍ່ແມ່ນວິທີ່ຈະແກ້ໄຂບັນຫາບ່ອນທີ່ບໍ່ມີແຮງງານຫຼົກກ້າ ແລະປັກດຳ, ການເຮັດນາຫວ່ານເຮັດໄດ້ແຕ່ ບ່ອນທີ່ມີນ້ຳຊົນລະປະທານສະດວກສະບາຍ .

## 1. ການຕຽມດິນ

ການເຮັດນາຫວ່ານ ເພື່ອຈະໃຫ້ໄດ້ຮັບຜົນດີຈະຕ້ອງກຽມດິນໃຫ້ລະອຽດປັບໜ້າດິນໃຫ້ຮາບພຽງ. ສາມາດຄວບຄຸມລະດັບນ້ຳໄດ້, ດັ່ງນັ້ນຂັ້ນຕອນໃນການກຽມດິນຄວນປະຕິບັດດັ່ງລຸ່ມນີ້ :

– ປ່ອຍນ້ຳເຂົ້າພໍດິນອ່ອນແລ້ວຫວ່ານຝຸ່ນຄອກລົງໃຫ້ທົ່ວ ໃນອັດຕາ 5 ຫາ 10 ໂຕນ / ຮຕ ແລ້ວໄຖກົບ (ໄຖຮຸດ) ເພື່ອໃຫ້ ເຟືອງ ແລະຫຍ້າລົງດິນ, ປະໄວ້ 7 ຫາ 10 ມື້ ເພື່ອໃຫ້ເມັດຫຍ້າແຕກເປັນຕົ້ນນ້ອຍ

– ໄຖຄົ້ນເພື່ອກຳຈັດຕົ້ນຫຍ້ານ້ອຍທີ່ເກີດໃໝ່ແລ້ວອັດນ້ຳໄວ້ອີກປະມານ 7 ມື້ ເພື່ອໃຫ້ຫຍ້າເກີດໃໝ່

– ຄາດປະໄວ້ເພື່ອໃຫ້ກ້ອນຂີ້ໄຖແຕກປະໃຫ້ນ້ຳຖ້ວມປະມານ 3 ຫາ 5 ມື້ ຖ້າມີຫຍ້າຟູເທິງໜ້ານ້ຳໃຫ້ເກັບອອກ

– ຄາດລວດໃຫ້ລະອຽດປັບໜ້າດິນໃຫ້ພຽງ ຫຼັງຈາກການປັບໜ້າດິນໃຫ້ພຽງ. ປ່ອຍນ້ຳອອກແລ້ວຈຶ່ງວາງແປງໃຫ້ເໝາະສົມກັບເນື້ອທີ່ນາລວງກວ້າງ 6 ແມັດ ໄລຍະຫ່າງລະຫວ່າງແປງ 30 ແມັດ ເພື່ອສະດວກໃນການບົວລະບັດຮັກສາ. ຈະຕ້ອງໃຊ້ເວລາໃນການກຽມດິນຕາມຂັ້ນຕອນດັ່ງກ່າວຢ່າງໜ້ອຍ 20 ມື້ ເພື່ອໃຫ້ເຟືອງ ແລະຫຍ້າເນົ່າເປື່ອຍເປັນຝຸ່ນ.



ຮູບ. ການຕຽມດິນ

## 2. ການກຽມແນວພັນ

ແນວພັນທີ່ດີນອກຈາກຈະງອກດີແລ້ວຍັງຈະເປັນຕົ້ນ ທີ່ແຂງແຮງສາມາດເຕີບໂຕໄວການທີ່ໄດ້ເມັດພັນທີ່ສົມບູນ ຈຶ່ງຕ້ອງປະຕິບັດດັ່ງນີ້:

1. ເມັດພັນຕ້ອງບໍ່ມີສິ່ງເຈືອປົນກັບເມັດເຂົ້າພັນອື່ນ ຫຼືເມັດຫຍ້າ, ພະຍາດ ແລະແມງໄມ້
2. ຕ້ອງທົດລອງຄວາມງອກຂອງແນວພັນເສຍກ່ອນ, ຄວາມງອກຢ່າງໜ້ອຍ 80 % ຂຶ້ນໄປ
3. ການຄັດເລືອກແນວພັນຄວນປະຕິບັດດັ່ງນີ້:

– ເອົານ້ຳໃສ່ຄຸ ຫຼືພາຊະນະອື່ນໆກໍ່ໄດ້, ເອົາໄຂ່ລົງ (ປົກກະຕິເອົາໄຂ່ລົງແຊ່ນ້ຳໄຂ່ຈະນອນຢູ່ກົ້ນຄຸ) ຕື່ມເກືອ ຫຼືປຸຍຢູເລຍລົງຄົນໃຫ້ເປື່ອຍຕື່ມປຸຍ ຫຼືເກືອລົງຈົນກວ່າໄຂ່ຈະຟູຂຶ້ນແລ້ວເອົາເຂົ້າປູກລົງ, ເມັດຫຍ້າ ແລະເຂົ້າລີບກໍ່ຈະຟູຂຶ້ນເຫຼືອແຕ່ເມັດເຕັມຢູ່ກົ້ນຄຸ, ນຳເອົາແຕ່ເມັດເຕັມໃສ່ໃນເປົານຳໄປລ້າງແລ້ວໄປແຊ່ນ້ຳສະອາດ (ຫ້າມບໍ່ໃຫ້ເອົາເຂົ້າແຊ່ໃນນ້ຳເກືອດົນ)

– ໃຊ້ເຄື່ອງຄັດເມັດພັນ ຫຼືໃຊ້ດົ້ງຝັດດ້ວຍມື, ເພື່ອຈະໄດ້ເມັດພັນທີ່ຕົ່ງດີ ແລະຄັດເຂົ້າລີບ, ເມັດຫຍ້າ ແລະສິ່ງເຈືອປົນອອກ.




ຮູບ. ການຄັດແນວພັນ

## 3. ອັດຕາແນວພັນ

ຈຳນວນເມັດພັນທີ່ໃຊ້ເຮັດນາຫວ່ານ 80 ຫາ 90 ກລ/ຮຕ ຫຼື 15 ກລ ຕໍ່ໄລ່ ຖ້າໃຊ້ເມັດພັນໜ້ອຍກວ່ານີ້ຈະເຮັດໃຫ້ເຂົ້າແຕກກໍ ແລະການສຸກຂອງເຂົ້າບໍ່ພ້ອມກັນ, ຫຍ້າເກີດຫຼາຍ.

## 4. ການຕົກກ້າ

ການແຊ່, ການບົ່ມ ແລະການຫວ່ານເມັດພັນປະຕິບັດຂັ້ນຕອນຄື: ກັນກັບນາດຳ, ແຊ່ເມັດພັນ 24 ຫາ 36 ຊົ່ວໂມງ.

ເມື່ອເມັດພັນແຕກໜໍ່ຍາວປະມານ 1 ຫາ 2 ມມ. ສາມາດນຳໄປຫວ່ານໄດ້ການຫວ່ານ ຄວນຫວ່ານໃຫ້ພໍດີເມັດເຂົ້າຈົມລົງໃນດິນເຄິ່ງເມັດແມ່ນເໝາະສົມ. ຫຼັງຈາກກຽມດິນປັບໜ້າດິນໃຫ້ລະອຽດແລ້ວຈຶ່ງຫວ່ານເມັດເຂົ້າລົງແລ້ວຂັງນ້ຳໄວ້ເພື່ອໃຫ້ເມັດດິນຖົມເຂົ້າ, ຂັງນ້ຳໄວ້ໜຶ່ງຄືນແລ້ວຈຶ່ງລະບາຍນ້ຳອອກຄ່ອຍໆ.

## 5. ການບົວລະບັດຮັກສາ

ເມື່ອຫວ່ານເຂົ້າລົງແປງນາແລ້ວເລາະເບິ່ງບ່ອນນ້ຳຂັງໃຫ້ລະບາຍອອກໃຫ້ໝົດ. ຫຼັງຈາກຫວ່ານໄດ້ 4 ຫາ 5 ມື້ແລ້ວປ່ອຍນ້ຳເຂົ້າຄ່ອຍໆ ພໍດີຖ້ວມໜໍ່ກ້າແລ້ວຄ່ອຍໆເພີ່ມລະດັບນ້ຳຂຶ້ນຕາມ

ການຈະເລີນເຕີບໂຕຂອງໜໍ່ກ້າ ແຕ່ໃຫ້ຢູ່ໃນລະດັບ 5 ຊມ, ຫຼັງຈາກຫວ່ານໄດ້ 20 ມື້ ຈຶ່ງໃສ່ຝຸ່ນສູດ 16 : 20 : 00 ຫຼື 18 : 46 : 00 ຫຼື 15 : 15 : 15.

ຖ້າພັນປັບປຸງ ໃຫ້ໃສ່ 200 ກລ / ຮຕ , ເຂົ້າພັນພື້ນເມືອງ 100 ຫາ 150 ຮຕ. ແຕ່ກໍ່ຂຶ້ນກັບຄວາມອຸດົມສົມບູນຂອງດິນ ແລະຊະນິດແນວພັນໃຫ້ໃສ່ຝຸ່ນຢູເລຍກ່ອນເຂົ້າອອກດອກ 30 ມື້ (ໄລ ຍະເຂົ້າຈໍ່ຕັ້ງທ້ອງ) ກ່ອນໃສ່ຝຸ່ນຄວນລົດລະດັບນ້ຳໃຫ້ເຫຼືອ 5 ຊມ ຈະເໝາະສົມ ແລະບໍ່ໃຫ້ນ້ຳຂາດຈົນເຖິງກ່ອນການເກັບກ່ຽວ 10 ມື້.



ຮູບ. ການໃສ່ຝຸ່ນ

## 6. ການປ້ອງກັນ ແລະການປາບສັດຕູພືດ

ລົງຕິດຕາມກວດກາສັດຕູພືດເປັນປະຈຳ ຖ້າຫາກມີແມງໄມ້ ແລະພະຍາດ ຫຼືຕົ້ນເຂົ້າຜິດປົກກະຕິ ໃຫ້ລາຍງານວິຊາການປະຈຳຢູ່ທ້ອງຖິ່ນ.

ການໃຊ້ຢາຂ້າຫຍ້າ ແມ່ນແນະນຳໃຊ້ຢາໂປຼປານິນ (PROPA NIL) STAM. F ອັດຕາ 150 ຊີຊີ ສຳລັບຫຍ້າໃບກວ້າງ, ຫຍ້າໃບແຄບເຊັ່ນ: ຫຍ້າເຂົ້ານົກ, ຫຍ້າຮັງກາ, ເຂົ້າຈະເຫຼືອງປະມານ 1 ອາທິດ ແລ້ວກໍ່ຈະຂຽວຄືນ (ການໃຊ້ຢາຈະໃຊ້ຕາມການແນະນຳໃນສະຫຼາກຕິດແກ້ວກໍ່ໄດ້).

**ໝາຍເຫດ:** ຖ້າການປັບໜ້າດິນຮາບພຽງດີ ການໃສ່ຝຸ່ນຮອງພື້ນແມ່ນເໝາະສົມ, ຖ້າດິນບໍ່ພຽງແມ່ນນ້ຳຂັງ ຫຼືຕອນເວລາເອົານ້ຳໃສ່ໃນເບື້ອງຕົ້ນຈະພາໃຫ້ເກີດເທົາ ແລະມັນຈະບັງແສງແດດຄວາມຮ້ອນເກີດຂຶ້ນຈະເຮັດໃຫ້ໜໍ່ເຂົ້າຕາຍໄດ້.

ຈຶ່ງສັງເກດເບິ່ງຕົ້ນເຂົ້າໃນເວລາເຂົ້າຈໍ່ຕັ້ງທ້ອງຫາກຕົ້ນເຂົ້າສົມບູນຂຽວງາມດີກໍ່ບໍ່ຄວນໃສ່ຝຸ່ນເລັ່ງ (N ) ຕື່ມອີກ.

## 7. ການເກັບກ່ຽວ

ການເກັບກ່ຽວ ຈະຕ້ອງໄດ້ມີການວາງແຜນການຢ່າງລະອຽດຄວນກະກຽມອຸປະກອນບັນຈຸໃຫ້ເໝາະສົມ ແລະພຽງພໍ.

- ໃກ້ຈະເກັບກ່ຽວຄວນຕິດຕາມຂ່າວອຸຕຸນິຍົມວິທະຍາກ່ຽວກັບດິນຟ້າອາກາດ
- ເຂົ້າອອກດອກ 50 % ແລ້ວຫຼັງຈາກນັ້ນ 25 ມື້ ກໍ່ເກັບກ່ຽວໄດ້
- ເຂົ້າເຫຼືອງ 60 % ແລ້ວລະບາຍນ້ຳອອກ. 10 ມື້ ຕໍ່ ມາ ກໍ່ ເກັບ ກ່ຽວໄດ້


**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**



ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ
ໜ່ວຍງານ ພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ


# ຂໍ້ແນະນຳ

# ເຕັກນິກການເຮັດນາຫວ່ານດິນຕົມ




ຈັດຕັ້ງປະຕິບັດໂດຍ: **CETDU**
(ໜ່ວຍງານພັດທະນາຮູບແບບ ສົ່ງເສີມ ແລະ ຝຶກອົບຮົມ ຂັ້ນສູນກາງ)
ຮ່ວມກັບ:
ໂຄງການ ສົ່ງເສີມ ກະສິກຳ **(LEAP)**